# ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ

ກົງປະສານ ບົວລີວົງສະຫວັດ[1], ຂັນທະລີ ພິມມະເສນ[2], ເພັດອຸດອນ ວົງລະຄອນ[3], ແສງສະໄໝ ນາມວົງສາ[4]

ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ

## ບົດຄັດຫຍໍ້

ການສຶກສາວິທະຍານິພົນ ລະດັບປະລິນຍາໂທ ມີຈຸດປະສົງ ເພື່ອສຶກສາລະດັບການມີສ່ວນຮ່ວມ ຂອງປະຊາ ຊົນ ໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ, ນະຄອນປາກເຊ, ແຂວງຈຳປາສັກ ແລະ ຂໍ້ສະເໜີແນະໃນການມີສ່ວນຮ່ວມໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ, ນະຄອນປາກເຊ, ແຂວງຈຳປາສັກ ປະກອບມີ 4 ດ້ານ ຄື: 1) ດ້ານການມີສ່ວນຮ່ວມໃນການຕັດສິນໃຈ, 2) ດ້ານການມີສ່ວນຮ່ວມໃນການດຳເນີນງານ, 3) ດ້ານການມີສ່ວນຮ່ວມຮັບຜົນປະໂຫຍດ ແລະ, 4) ດ້ານການມີສ່ວນຮ່ວມກວດກາປະເມີນຜົນ, ເຊິ່ງການວິໄຈຄັ້ງນີ້ເປັນການວິໄຈເຊີງປະລິມານ, ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ ແມ່ນປະຊາກອນທີ່ຢູ່ໃນບ້ານໃຫຍ່ໂນນສະຫວ່າງ, ນະຄອນປາກເຊ, ແຂວງຈຳປາສັກ ຈຳນວນທັງໝົດ 351 ຄົນ, ເຄື່ອງມືທີ່ນຳໃຊ້ໃນການເກັບກຳຂໍ້ມູນ ແມ່ນແບບສອບຖາມ, ສະຖິຕິທີ່ນຳໃຊ້ໃນການວິ ເຄາະ ຂໍ້ມູນໄດ້ແກ່: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

ຜົນການວິໄຈພົບວ່າ: ປະຊາຊົນສ່ວນໃຫຍ່ທີ່ຕອບແບບສອບຖາມ ຈາກຜົນການວິເຄາະກຸ່ມຕົວຢ່າງທີ່ຕອບແມ່ນເປັນເພດຊາຍ, ມີອາຍຸ 51 ປີຂຶ້ນໄປ, ມີລະດັບການສຶກສາມັດທະຍົມສຶກສາຕອນປາຍ, ມີສະຖານະພາບແຕ່ງງານແລ້ວ, ອາຊີບສ່ວນໃຫຍ່ແມ່ນຄ້າຂາຍ, ມີລາຍໄດ້ຕໍ່ເດືອນ 2.500.001-3.000.000 ກີບ ແລະ ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ຢູ່ໃນລະດັບຫຼາຍ, ປະຊາ ຊົນມີລະດັບການມີສ່ວນຮ່ວມຫຼາຍທີ່ສຸດແມ່ນ ດ້ານການມີສ່ວນຮ່ວມໃນການດຳເນີນງານ, ຮອງລົງມາແມ່ນດ້ານການມີສ່ວນຮ່ວມຮັບຜົນປະໂຫຍດ, ຖັດມາດ້ານການມີສ່ວນຮ່ວມໃນການຕັດສິນໃຈ ແລະ ສຸດທ້າຍແມ່ນດ້ານການມີສ່ວນຮ່ວມໃນການກວດກາປະເມີນຜົນ ຕາມລຳດັບ.

ຄຳສັບສຳຄັນ: ການມີສ່ວນຮ່ວມ, ການພັດທະນາຊຸມຊົນ.

[1] *ກົງປະສານ ບົວລີວົງສະຫວັດ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ, ອີເມວ:* Sokdy2009@gmail.com

[2] *ຂັນທະລີ ພິມມະເສນ, ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ອີເມວ: khphimmasenh@gmail.com*

[3] *ເພັດອຸດອນ ວົງລະຄອນ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ, ອີເມວ: Phetvonglakhone@gmail.com*

[4] *ແສງສະໄໝ ນາມວົງສາ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ, ອີເມວ: saengsaminamvongsa@gmail.com*

# PARTICIPATION OF PEOPLE IN DEVELOPMENT OF NONSAVANG VILLAGE PAKSE CITY, CHAMPASACK PROVINCE

**Kongpasanh BOUALYVONGSAVATH**[1], **Khanthaly PHIMMASANE**[2]
**Phetoudone VONGLAKONE**[3] , **Saengsamai NAMVONGSA**[4]
The Faculty of Ecomics and Management, Champasack University, Lao PDR

**Abstract**

This Master degree's thesis: people's participation in the development of Nonsavang Village, Pakse City, Champasak Province, and recommendations for participation in the development of Nonsavang Village, Pakse City, Champasak Province, including 4 aspects: 1) participation in decision-making, 2) participation in operations, 3) participation in benefits sharing and, 4) participation in evaluation.

Samples are collected in Nonsavang Villagers, total 315 person, including questionnaire, statistic analyze methods with Frequency percentage, mean and standard deviation value.

After study, most of the collected samples are answered by male villagers, 51 years old above, graduated high school, marriage, working as business and earned 2,500,001 kip to 3,000,000 kip, averagely at the high range to people's participation in the development of Nonsavang Village, Pakse City, Champasak Province. On this people's participation in the development, villagers are most interested in Participating in operations, follow by benefit-sharing, followed-up decision-making, and finally evaluation, respectively.

Key words: Participation, Community Development.

[1] *Kongpasanh BOUALYVONGSAVATH, Faculty of Economic and Management, Email: Sokdy2009@gmail.com*
[2] *Khanthaly PHIMMASEN, Faculty of Education, Email: khphimmasenh@gmail.com*
[3] *Phetoudone VONGLAKHONE, Faculty of Economic and Management, Email: Phetvonglakhone@gmail.com*
[4] *Saengsamai NAMVONGSA, Faculty of Economic and Management, Email: saengsaminamvongsa@gmail.com*

## 1. ພາກສະເໜີ

ການມີສ່ວນຂອງປະຊາຊົນ ແມ່ນຂະບວນການທີ່ໃຫ້ປະຊາຊົນເຂົ້າມາມີສ່ວນຮ່ວມໃນການດຳເນີນງານພັດ ທະນາ, ຮ່ວມກັນຄິດ, ຮ່ວມກັນຕັດສິນໃຈ ເພື່ອແກ້ໄຂບັນຫາຂອງຕົນເອງ ໂດຍໃຊ້ຄວາມຄິດສ້າງສັນ, ຄວາມຮູ້ ແລະ ປະສົບການ ບວກກັບຄວາມຊຳນິຊຳນານຂອງຕົນເອງ ເພື່ອສະໜັບສະໜູນຕິດຕາມຜົນການປະຕິບັດງານຂອງອົງກອນ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການມີສ່ວນຮ່ວມຂອງປະຊາຊົນຢ່າງແທ້ຈິງ. ໝາຍຄວາມວ່າ: ປະຊາຊົນ ຫຼື ຊຸມຊົນພັດທະນາຂີດຄວາມສາມາດຂອງຕົນເອງໃນການຈັດການ, ຄວບຄຸມການນຳໃຊ້ຊັບພະຍາ ກອນ ແລະ ປັດໄຈການຜະລິດທີ່ມີຢູ່ໃນສັງຄົມ ເພື່ອຜົນປະໂຫຍດສູງສຸດຕໍ່ການດຳລົງຊີວິດທາງເສດຖະກິດ ແລະ ສັງຄົມ. ດັ່ງນັ້ນ, ການພັດທະນາຈຶ່ງເລີ່ມຈາກຄວາມຕ້ອງ ການຂອງຊຸມຊົນແທນຄວາມຕ້ອງການຂະແໜງການຂອງລັດຖະບານ; ຮູບແບບຂອງການມີສ່ວນຮ່ວມ ແມ່ນການທີ່ປະຊາຊົນພາຍໃນບ້ານ ທີ່ມີການຮ່ວມກຸ່ມກັນ ເຊິ່ງເປັນແນວຄິດທີ່ສະໜັບສະໜູນຄວາມເຂັ້ມແຂງຂອງຊຸມຊົນບ້ານ ແລະ ສັງຄົມ ໂດຍເນັ້ນໃສ່ການມີສ່ວນຮ່ວມຂອງປະຊາຊົນ ໃນການຮ່ວມຄິດ, ປະຕິບັດ ແລະ ແກ້ໄຂບັນ ຫາ ເຊິ່ງການແກ້ໄຂບັນຫານັ້ນເປັນສິ່ງທີ່ຈຳເປັນຕ້ອງອາໄສການຮ່ວມມືເຊິ່ງກັນ ແລະ ກັນໃນທຸກລະດັບ, ຕ້ອງລະ ດົມທຸກພາກສ່ວນໃນສັງຄົມ ໂດຍສະເພາະຊຸມຊົນບ້ານ ເພື່ອສົ່ງເສີມຄວາມເປັນຊຸມຊົນ ສາ ມາດເພິ່ງຕົນເອງ, ສ້າງຄວາມເຂັ້ມດ້ວຍຕົນເອງ, ປະຊາຊົນຮັ່ງມີຜາສຸກ ແລະ ສາ ມາດແກ້ໄຂບັນຫາຕ່າງໆດ້ວຍຕົນເອງໄດ້.

ນັບແຕ່ປີ 2011 ເປັນຕົ້ນມາ, ພວກເຮົາໄດ້ສຸມໃສ່ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ເຂົ້າສູ່ຕົວຈິງດ້ວຍຈິດໃຈບຸກທະລຸທັງ 4 ດ້ານ ຢ່າງແຂງແຮງ. ມາຮອດປີ 2012 ມະຕິຕົກລົງຂອງກົມການເມືອງສູນກາງພັກ, ສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012 ໄດ້ກຳນົດນະໂຍ ບາຍວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ, ເຊິ່ງພວກເຮົາຈະໄດ້ປະຕິ ບັດເຮັດທົດລອງວຽກງານ 3 ສ້າງ ເຊິ່ງແມ່ນການແບ່ງຄວາມຮັບຜິດຊອບຄຸ້ມຄອງ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນລະບົບອັນຈະແຈ້ງຕາມທິດ ເພີ່ມສິດ ແລະ ເພີ່ມຄວາມຮັບຜິດຊອບ ໃຫ້ແກ່ທ້ອງຖິ່ນຫຼາຍຂຶ້ນ. ໃນຕະຫຼອດໄລຍະຈັດຕັ້ງປະຕິບັດການເຮັດທົດລອງ ບັນ ດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ໂດຍໄດ້ຄົ້ນ ຄວ້າເຊື່ອມຊຶມ ແລະ ຫັນເອົາເນື້ອໃນມະຕິດັ່ງກ່າວ ເປັນນິຕິກຳ, ເປັນແຜນການ, ໂຄງການຕ່າງໆ ຢ່າງເປັນລະບົບຄົບຊຸດ ແລະ ເປັນລະອຽດຢ່າງຕໍ່ເນື່ອງ ໂດຍມີການມອບສິດ, ມອບຄວາມຮັບຜິດຊອບ, ການແບ່ງປັນຜົນປະ ໂຫຍດອັນເໝາະສົມໃຫ້ແກ່ທ້ອງຖິ່ນຮາກຖານ ຢ່າງຈະ ແຈ້ງ ພ້ອມທັງຈັດຕັ້ງປະຕິບັດຕົວຈິງ ໄດ້ຮັບຜົນສຳເລັດເປັນຢ່າງດີ, ເຮັດໃຫ້ຄວາມເປັນເຈົ້າການແລະ ຄວາມຮັບ ຜິດຊອບຂອງທ້ອງຖິ່ນຮາກຖານ ໄດ້ຮັບການຍົກສູງ. ແຕ່ການເຮັດທົດລອງຜ່ານມານັ້ນ, ຕົ້ນຕໍແມ່ນເລັ່ງໃສ່ຈັດຕັ້ງປະຕິບັດຢູ່ຂັ້ນບ້ານ ໃນ 109 ບ້ານເປົ້າໝາຍເຮັດທົດລອງ, ສ່ວນແຂວງ ແລະ ຂັ້ນເມືອງ ນັ້ນແມ່ນຍັງບໍ່ທັນໄດ້ລົງເລິກຈັດຕັ້ງປະຕິບັດເທື່ອ. ພ້ອມດຽວກັນນີ້, ຄວາມຮັບຮູ້ເຂົ້າໃຈຕໍ່ການທົດລອງ ຂອງບັນດາກະຊວງ ແລະ ທ້ອງ ຖິ່ນຮາກຖານ ຍັງບໍ່ທັນເລິກເຊິ່ງ ແລະ ຍັງບໍ່ທັນເປັນເອ ກະພາບກັນສູງແທ້ (ນາຍົກລັດຖະມົນຕີແຫ່ງ ສປປ ລາວ, 2016).

ນະຄອນປາກເຊ ແມ່ນນະຄອນທີ່ຂຶ້ນກັບແຂວງຈຳປາສັກ ເຊິ່ງເປັນທີ່ຕັ້ງດ້ານຍຸດທະສາດສຳຄັນ ຂອງແຂວງ, ເປັນເທດສະບານແຂວງ ແລະ ເປັນທີ່ຕັ້ງສຳນັກ ງານ-ອົງການຂັ້ນແຂວງ, ສູນກາງ ແລະ ຕ່າງປະເທດຈຳ ນວນໜຶ່ງ, ລວມທັງທີ່ຕັ້ງສຳນັກງານ-ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນພາຍໃນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດ ແລະ ກິດຈະການ ຢູ່ແຂວງຈຳປາສັກ; ເປັນສູນກາງທາງດ້ານ

ເສດຖະກິດ, ການຄ້າ, ການບໍລິການ ແລະ ທ່ອງທ່ຽວ ຂອງແຂວງ ແລະ ບັນດາແຂວງພາຍໃຕ້ ມີເນື້ອທີ່ທັງໝົດແມ່ນ 12.508 ເຮັກຕາ (125,08 ກິໂລຕາແມັດ), ກວມເອົາ 0,81 % ຂອງເນື້ອທີ່ທັງໝົດຂອງແຂວງຈຳປາສັກ, ມີປະຊາກອນປະ ມານ 85.066 ຄົນ, ຍິງ 44.045 ຄົນ, ມີ 15.18 ຄົວເຮືອນ (2021) ສະເລ່ຍຄວາມໜາແໜ້ນ 680 ຄົນ/ກິໂລຕາແມັດ. ດ້ານການປົກຄອງປະກອບມີ 42 ບ້ານ, ບ້ານເຂດໃນເມືອງ 37 ບ້ານ ແລະ ຊານເມືອງ 5 ບ້ານ; ໂດຍປະຕິບັດຕິບັດຕາມມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 25/ກມສພ, ວ່າດ້ວຍການກຳນົດຈຸປະສົງ, ເປົ້າໝາຍ ແລະ ມາດຕະການ ຈັດຕັ້ງປະຕິບັດວຽກງານ 3 ສ້າງ, ບົດແນະ ນຳຂອງທ່ານເຈົ້າແຂວງຈຳປາສັກ ສະບັບເລກທີ 01/ຄຈພຂ.ຈສ, ລົງວັນທີ 10 ເມສາ 2018 ວ່າດ້ວຍບາດ ກ້າວນຳພາສ້າງ ແລະ ເຮັດທົດລອງບ້ານພັດທະນາປະຊາ ຊົນຢູ່ດີ-ກິນດີ, ມະຕິຕົກລົງຂອງຄະນະປະຈຳພັກແຂວງ ສະບັບເລກທີ 471 /ຄຈພຂ.ຈສ, ລົງວັນທີ 3 ສິງຫາ 2018 ວ່າດ້ວຍການຮັບຮອງມາດຖານການສ້າງຄອບຄົວ ແລະ ພັດທະນາປະຊາຊົນຢູ່ດີກິນຢູ່ດີ-ກິນດີ ແລະ ມະຕິຂອງຄະນະປະຈຳພັກນະຄອນ ສະບັບເລກທີ 129/ຄຈພນ.ປຊ, ລົງວັນທີ 27 ກໍລະກົດ 2021 ນະຄອນປາກເຊ ໄດ້ກຳນົດເອົາ 08 ບ້ານ ເປັນເປົ້າໝາຍທົດລອງບ້ານພັດທະນາປະຊາຊົນຢູ່ດີ-ກິນດີ ມີຄື: ບ້ານພັດທະນາໂນນສະຫວ່າງ, ບ້ານພັດທະນາສະໜາມໄຊ, ບ້ານພັດທະນາໂພນໄຊ, ບ້ານພັດທະນາຄັນເກິງ, ບ້ານພັດທະນາດອນເຂາະ, ບ້ານພັດທະນາແກ້ວສຳພັນ, ບ້ານພັດທະນາໂພຕາກ ແລະ ບ້ານພັດທະນາຈັດສັນ (ອົງການປົກຄອງນະຄອນປາກເຊ, 2022).

ບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳ ປາສັກ ເຊິ່ງເປັນໜຶ່ງໃນບ້ານທົດລອງສາມສ້າງ ແລະ ບ້ານເປົ້າໝາຍທົດລອງບ້ານພັດທະນາປະຊາຊົນຢູ່ດີ-ກິນດີ, ປະກອບມີ 559 ຫຼັງຄາເຮືອນ, ໃນນັ້ນມີ 725 ຄອບ ຄົວ ແລະ ພົນລະເມືອງທັງໝົດ 2,865 ຄົນ, ຍິງ 1.441 ຄົນ; ປະຊາຊົນພາຍໃນບ້ານປະກອບອາຊີບຄ້າຂາຍ ກວມເອົາ 50%, ຮອງລົງມາແມ່ນເຮັດການຜະລິດ ກວມເອົາ 30% ແລະ ພະນັກງານ 20%. ໃນປະຈຸບັນຈິດສຳນຶກດ້ານການມີສ່ວນຮ່ວມຂອງປະຊາຊົນໃນບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ, ແຂວງຈຳປາສັກ ແມ່ນຢູ່ໃນລະດັບປານກາງຈະສາມາດສັງເກດເຫັນໄດ້ໃນເວລາຈັດກອງປະຊຸມມີຕົວແທນໃນແຕ່ລະຄອບຄົວເຂົ້າຮ່ວມຍັງໜ້ອຍ; ເນື່ອງຈາກປະຊາຊົນຈຳນວນນ້ອຍໜຶ່ງຍັງບໍ່ທັນເຊື່ອມຊຶມເລິກ ເຊິ່ງຕໍ່ແນວທາງຂອງພັກ-ລັດວາງອອກ, ລະດັບຄວາມຮູ້-ຄວາມສາມາດບໍ່ສູງ, ບໍ່ມີແບບແຜນ ແລະ ຫົວຄິດປະດິດສ້າງໃນການເຮັດວຽກ, ຄວາມທຸກຍາກຂາດເຂີນທາງດ້ານເສດຖະກິດພາຍໃນຄອບຄົວ; ບັນຫາສຳຄັນທີ່ສຸດຄືຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຂອງບັນດາການນຳບ້ານຍັງບໍ່ທັນສູງ, ຂາດທຶນຮອນງົບ ປະມານໃນການປະຕິ ບັດໃນບັນດາໂຄງການຂອງບ້ານ, ຂາດການປະສານງານຢ່າງກົມກຽວ ລະຫວ່າງ ຂະແໜງການຂອງລັດ ກັບ ອຳນາດການປົກຄອງບ້ານ; ເຊິ່ງບັນຫາສ່ວນໃຫຍ່ທີ່ປະຊາຊົນບໍ່ມີສ່ວນຮ່ວມໃນການພັດທະນາບ້ານເກີດເນື່ອງຈາກວ່າປະຊາຊົນສ່ວນຫຼາຍປະກອບອາຊີບຄ້າຂາຍ, ພະນັກງານ, ກຳມະກອນຮັບຈ້າງ ເຊິ່ງມີຖານະປານກາງ ແລະ ທຸກຍາກ; ເວລາສ່ວນຫຼາຍໃຊ້ໃນການທຳມາຫາກິນເພື່ອຫາລ້ຽງຊີວິດ ຈົນບໍ່ມີເວລາໃນການພັດທະນາທ້ອງຖິ່ນບ້ານເກີດຂອງຕົນ ສົນໃຈພຽງແຕ່ເລື່ອງປາກທ້ອງຂອງຕົນເອງ ແລະ ຄອບຄົວເທົ່ານັ້ນ (ອຳນາດການປົກຄອງບ້ານໃຫຍ່ໂນນສະຫວ່າງ, 2022).

ຈາກບັນຫາທີ່ກ່າວມາຂ້າງເທິງ ຜູ້ວິໄຈຈຶ່ງມີຄວາມສົນ ໃຈທີ່ຈະສຶກສາວ່າ: ປະຊາຊົນໃນບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ມີລະດັບການມີສ່ວນຮ່ວມໃນການພັດທະນາບ້ານຂອງຕົນໃນດ້ານຕ່າງໆເຊັ່ນ: 1) ດ້ານການມີສ່ວນຮ່ວມໃນການຕັດສິນໃຈ, 2) ດ້ານການມີສ່ວນຮ່ວມໃນການດຳເນີນງານ, 3) ດ້ານການມີສ່ວນຮ່ວມໃນການຮັບຜົນປະໂຫຍດ ແລະ 4) ດ້ານການມີສ່ວນຮ່ວມໃນການປະເມີນຜົນ ວ່າໃນແຕ່ລະດ້ານເປັນແນວໃດແດ່,

ອຳນາດການປົກຄອງນະຄອນປາກເຊ, ອຳ ນາດການປົກຄອງບ້ານ ແລະ ອົງການຈັດຕັ້ງທຸກພາກ ສ່ວນ ໄດ້ເປີດໂອກາດໃຫ້ປະຊາ ຊົນພາຍໃນບ້ານເຂົ້າມາມີສ່ວນຮ່ວມໃນການພັດທະນາຊຸມຊົນ ກໍຄືບ້ານໃຫຍ່ໂນນສະຫວ່າງ ໃນດ້ານໃດແດ່ ແລະ ຂໍ້ສະເໜີແນະແນວໃດ ເພື່ອເປັນການປັບປຸງແກ້ໄຂ ຫຼື ເພີ່ມປະສິດທິພາບຂອງການມີສ່ວນຮ່ວມໃນການພັດທະນາໃນການພັດທະ ນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ໃຫ້ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ຍືນຍົງ ຕະ ຫຼອດໄປ.

## 2. ຈຸດປະສົງ

2.1 ເພື່ອສຶກສາລະດັບການມີສ່ວນຮ່ວມຂອງປະຊາ ຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ.

2.2 ເພື່ອຊອກຫາຂໍ້ສະເໜີແນະຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ.

## 3. ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ ມີຈຸດປະສົງຫຼັກ ເພື່ອສຶກສາລະດັບ ແລະ ຂໍ້ສະເໜີແນະຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ໂດຍການຄັດເລືອກກຸ່ມຕົວຢ່າງດ້ວຍການໃຊ້ສູດການຄຳນວນຕາມວິທີຂອງ Taro Yamane (1973) ເຊິ່ງການສຶກສາຄັ້ງນີ້ໄດ້ໃຊ້ກຸ່ມຕົວຢ່າງຢູ່ຈຳນວນ 351 ຄົນ. ໂດຍແບບສອບຖາມທີ່ໃຊ້ໃນການສຳຫຼວດ ເປັນແບບສອບຖາມແບບມາດຕາສ່ວນປະມານຄ່າ (Rating Scale) ທີ່ແບ່ງອອກເປັນ 5 ລະດັບ ຕາມວິທີຂອງ (Rensis Likert Method).

ການວິເຄາະ ແລະ ການແປຜົນຂໍ້ມູນ

ໃນການສຶກສາຄັ້ງນີ້ ໄດ້ນາເອົາຂໍ້ມູນລະດັບການມີສ່ວນຮ່ວມໃນການພັດທະນາຊຸມຊົນບ້ານໃຫຍ່ໂນນສະ ຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ທີ່ເກັບລວບ ລວມມາວິເຄາະ ໂດຍນຳໃຊ້ໂປຣແກຣມສຳເລັດຮູບທາງສະຖິຕິ ແລະ ວິເຄາະຂໍ້ມູນ ໃນການປະມວນຜົນ ມີຂັ້ນຕອນດັ່ງຕໍ່ໄປນີ້: 1) ເກັບເອົາຂໍ້ມູນທັງໝົດໂດຍໄດ້ນຳແບບສອບຖາມ ມາເພື່ອເຮັດການກວດສອບ ແລະ ຄັດເລືອກແບບສອບຖາມ ທີ່ມີຄວາມສົມບູນຄວາມຖືກຕ້ອງທຸກສະ ບັບ; 2) ຈາກນັ້ນປ້ອນຂໍ້ມູນເຂົ້າໃນ ໂປຣແກຣມສຳເລັດຮູບທາງດ້ານສະຖິຕິ ເພື່ອເຮັດການວິເຄາະ ສຳລັບ Likert ເປັນຕົວວັດລະດັບ ຄື 5=ຫຼາຍທີ່ສຸດ, 4=ຫຼາຍ, 3=ປານກາງ, 2=ໜ້ອຍ ແລະ 1=ໜ້ອຍທີ່ສຸດ.

### ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

ໃນການວິເຄາະ ຂໍ້ມູນຜູ້ສຶກສາໄດ້ນຳເອົາຫຼັກສະຖິຕິມາປະກອບການວິເຄາະ ຂໍ້ມູນດັ່ງນີ້

1). ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ໄດ້ແກ່ ຄວາມຖີ່ (Frequency) ຄ່າສ່ວນຮ້ອຍ (Percentage)

2). ສະຖິຕິທີ່ໃຊ້ໃນການວິເຄາະລະດັບການມີສ່ວນຮ່ວມຂອງປະຊາຊົນ ໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ໄດ້ແກ່ ຄ່າສະ ເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation)

## 4. ຜົນໄດ້ຮັບ

4.1 ຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ

ຈາກຜົນຂອງການສຶກສາເຫັນວ່າ ກຸ່ມຕົວຢ່າງທີ່ຕອບແບບສອບຖາມສ່ວນຫຼາຍເປັນເພດຊາຍ ມີຈຳນວນເຖິງ 191 ຄົນ ກວມເອົາອັດຕາສ່ວນ 54.4 ສ່ວນຮ້ອຍ, ຮອງລົງມາແມ່ນເປັນເພດຍິງ ມີຈຳນວນ 160 ຄົນ ກວມເອົາອັດຕາສ່ວນ 45.6 ສ່ວນຮ້ອຍ. ມີອາຍຸລະຫວ່າງ 51 ຂຶ້ນໄປ ມີຈຳນວນເຖິງ 109 ຄົນ ກວມເອົາອັດຕາສ່ວນ 31.1 ສ່ວນຮ້ອຍ, ຮອງລົງມາແມ່ນມີອາຍຸລະ ຫວ່າງ 41-50 ປີ ມີຈຳນວນ 98 ຄົນ ກວມເອົາອັດຕາສ່ວນ 27.9 ສ່ວນຮ້ອຍ, ຖັດມາແມ່ນມີອາຍຸລະຫວ່າງ 31-40 ປີ ມີຈຳນວນ 96 ຄົນ ກວມເອົາອັດຕາສ່ວນ 27.4 ສ່ວນຮ້ອຍ, ຕໍ່ມາແມ່ນມີອາຍຸລະຫວ່າງ 21-30 ປີ ມີຈຳນວນ 43 ຄົນ ກວມເອົາ

ອັດຕາສ່ວນ 12.3 ສ່ວນຮ້ອຍ ແລະ ຜູ້ມີອາຍຸ 20 ປີລົງມາ ມີຈໍານວນ 5 ຄົນ ຄິດເປັນສ່ວນຮ້ອຍ 1.40 ສ່ວນຮ້ອຍ ຂອງກຸ່ມຕົວຢ່າງທັງໝົດ. ມີລະດັບການສຶກສາມັດທະຍົມຕອນປາຍ ມີຈໍານວນເຖິງ 168 ຄົນ ກວມເອົາອັດຕາສ່ວນ 47.9 ສ່ວນຮ້ອຍ, ຮອງລົງມາແມ່ນລະດັບການສຶກສາ ມັດທະຍົມຕອນຕົ້ນ ມີຈໍານວນ 78 ຄົນ ກວມເອົາອັດຕາສ່ວນ 22.2 ສ່ວນຮ້ອຍ, ຖັດມາແມ່ນລະດັບການສຶກສາປະລິນຍາຕີ ມີຈໍານວນ 51 ຄົນ ກວມເອົາອັດຕາສ່ວນ 14.5 ສ່ວນຮ້ອຍ, ຕໍ່ມາແມ່ນລະ ດັບການສຶກສາປະຖົມສຶກສາ ມີຈໍານວນ 31 ຄົນ ກວມເອົາອັດຕາສ່ວນ 8.8 ສ່ວນຮ້ອຍ, ຕາມມາແມ່ນລະດັບການສຶກສາ ສູງກວ່າປະລິນຍາຕີ ມີຈໍານວນ 7 ຄົນ ກວມເອົາອັດຕາສ່ວນ 2.0 ສ່ວນຮ້ອຍ ແລະ ລະດັບການສຶກສາອື່ນໆ ມີຈໍານວນ 2 ຄົນ ກວມເອົາອັດຕາສ່ວນ 0.6 ສ່ວນຮ້ອຍ. ມີສະຖານະພາບ ແຕ່ງງານແລ້ວ ມີຈໍານວນເຖິງ 249 ຄົນ ກວມເອົາອັດຕາສ່ວນ 70.9 ສ່ວນຮ້ອຍ, ຮອງລົງມາແມ່ນສະຖານະພາບ ໂສດ ມີຈໍານວນ 69 ຄົນ ກວມເອົາອັດຕາສ່ວນ 19.7 ສ່ວນຮ້ອຍ, ຖັດມາແມ່ນສະ ຖານະພາບໝ້າຍ ມີຈໍານວນ 19 ຄົນ ກວມເອົາອັດຕາສ່ວນ 5.4 ສ່ວນຮ້ອຍ ແລະ ສະຖານະພາບ ຢ່າຮ້າງ ມີຈໍານວນ 14 ຄົນ ກວມເອົາອັດຕາສ່ວນ 4 ສ່ວນຮ້ອຍ. ປະກອບອາຊີບຄ້າຂາຍ ມີຈໍານວນເຖິງ 102 ຄົນ ກວມເອົາອັດຕາສ່ວນ 29.1 ສ່ວນຮ້ອຍ, ຮອງລົງມາແມ່ນອາ ຊີບພະນັກງານລັດ ມີຈໍານວນ 84 ຄົນ ກວມເອົາອັດຕາສ່ວນ 23.9 ສ່ວນຮ້ອຍ, ຖັດມາແມ່ນອາຊີບພະນັກງານເອກະຊົນ ມີຈໍານວນ 77 ຄົນ ກວມເອົາອັດຕາສ່ວນ 21.9 ສ່ວນຮ້ອຍ, ຕໍ່ມາແມ່ນອາຊີບປູກຝັງ-ລ້ຽງສັດ ມີຈໍານວນ 48 ຄົນ ກວມເອົາອັດຕາສ່ວນ 13.7 ສ່ວນຮ້ອຍ, ຕາມມາແມ່ນອາຊີບພະນັກງານລັດວິສາຫະກິດ ມີຈໍາ ນວນ 22 ຄົນ ກວມເອົາອັດຕາສ່ວນ 6.3 ສ່ວນຮ້ອຍ ແລະ ອາຊີບອື່ນໆ ມີຈໍານວນ 18 ຄົນ ກວມເອົາອັດຕາສ່ວນ 5.1 ສ່ວນຮ້ອຍ. ມີລາຍໄດ້ລະຫວ່າງ 2.500.001-3.000.000 ກີບ ມີຈໍານວນເຖິງ 129 ຄົນ ກວມເອົາອັດ ຕາສ່ວນ 36.8 ສ່ວນຮ້ອຍ, ຮອງລົງມາແມ່ນລາຍໄດ້ 2.000.001-2.500.000 ກີບ ມີຈໍານວນ 80 ຄົນ ກວມເອົາອັດຕາສ່ວນ 22.8 ສ່ວນຮ້ອຍ, ຖັດມາແມ່ນລາຍໄດ້ 1.500.001-2.000.000 ກີບ ມີຈໍານວນ 61 ຄົນ ກວມເອົາອັດຕາສ່ວນ 17.4 ສ່ວນຮ້ອຍ, ຕໍ່ມາແມ່ນລາຍໄດ້ຫຼາຍກວ່າ 3.000.000 ກີບ ມີຈໍານວນ 34 ຄົນ ກວມເອົາອັດຕາສ່ວນ 9.7 ສ່ວນຮ້ອຍ, ຕາມມາແມ່ນລາຍໄດ້ 1.000.001-1.500.000 ກີບ ຈໍານວນ 30 ຄົນ ກວມເອົາອັດຕາສ່ວນ 8.5 ສ່ວນຮ້ອຍ ແລະ ລາຍໄດ້ຕໍ່າກວ່າ 1.000.000 ກີບ ມີຈໍານວນ 17 ຄົນ ກວມເອົາອັດຕາສ່ວນ 4.8 ສ່ວນຮ້ອຍ ຂອງຈໍານວນກຸ່ມຕົວຢ່າງທັງໝົດ.

4.2 ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈໍາປາສັກ

ຈາກຜົນການສຶກສາເຫັນວ່າ ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈໍາປາສັກ ໂດຍ ລວມຢູ່ໃນລະດັບຫຼາຍໃນທຸກດ້ານ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.659 (SD=0.618), ເມື່ອພິຈາລະນາແຕ່ລະດ້ານພົບວ່າ: ປະຊາຊົນມີລະດັບການມີສ່ວນຮ່ວມຫຼາຍທີ່ສຸດ ແມ່ນດ້ານການມີສ່ວນຮ່ວມໃນການດໍາເນີນງານ ມີຄ່າສະ ເລ່ຍເທົ່າກັບ 3.861 (SD=0.568), ຮອງລົງມາແມ່ນດ້ານການມີສ່ວນຮ່ວມໃນການຮັບຜົນປະໂຫຍດ ມີຄ່າສະ ເລ່ຍເທົ່າກັບ 3.663 (SD=0.578) ຖັດມາດ້ານການມີສ່ວນຮ່ວມໃນການຕັດສິນໃຈ ມີຄ່າສະເລ່ຍເທົ່າກັບ 3.563 (SD=0.733) ແລະ ສຸດທ້າຍດ້ານການມີສ່ວນຮ່ວມໃນການກວດກາປະເມີນຜົນ ມີຄ່າສະເລ່ຍເທົ່າກັບ 3.552 (SD=0.618).

4.3 ຂໍ້ສະເໜີແນະຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈໍາປາສັກຈາກຜົນການສັງລວມຄວາມຄິດເຫັນກ່ຽວກັບຂໍ້ສະເໜີແນະເພີ່ມຕື່ມໃນການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈໍາປາສັກພົບວ່າ: ສ່ວນຫຼາຍ ແມ່ນຢາກໃຫ້ບ້ານເອົາໃຈໃສ່

ປຸກລະດົມການຮັກສາຄວາມສະອາດສວຍງາມພາຍໃນບ້ານ, ຈັດໃຫ້ມີການເຮັດອະນາໄມຮ່ວມກັນຫຼາຍກວ່າເກົ່າ ແລະ ມີການບຸລະນະສ້ອມແປງເສັ້ນທາງໃນແຕ່ລະຮ່ອມ ເພື່ອໃຫ້ມີຄວາມສະດວກສະບາຍໃນການສັນ ຈອນໄປມາ ມີ 14 ເທື່ອຄົນ, ກວມເອົາ 24.1 ສ່ວນຮ້ອຍ, ຮອງລົງມາອຳນາດການປົກຄອງບ້ານຄວນເປີດໂອກາດໃຫ້ປະຊາຊົນເຂົ້າມາມີສ່ວນຮ່ວມໃນການດຳເນີນງານຢ່າງຕໍ່ເນື່ອງ ເພື່ອເປັນການແກ້ໄຂບັນຫາໃດໜຶ່ງຂອງບ້ານ ໂດຍສະເພາະແມ່ນບັນຫາທີ່ກ່ຽວຂ້ອງກັບຄວາມເດືອດ ຮ້ອນຂອງປະຊາຊົນໂດຍກົງ ມີຈຳນວນ 8 ເທື່ອຄົນ, ກວມເອົາ 13.7 ສ່ວນຮ້ອຍ ແລະ ຄວນສ້າງວຽກເຮັດງານທຳໃຫ້ປະຊາຊົນພາຍໃນບ້ານ ໂດຍສະເພາະຊາວໜຸ່ມໄວໜຸ່ມໃຫ້ມີລາຍຮັບຊ່ວຍເຫຼືອຕົນເອງ ແລະ ຄອບຄົວ ເພື່ອໃຫ້ເຂົາເຈົ້າຫ່າງໄກຈາກຢາເສບຕິດອີກດ້ວຍ ຈຳນວນ 8 ເທື່ອຄົນ, ກວມເອົາ 13.7 ສ່ວນຮ້ອຍ, ຖັດມາແມ່ນຢາກໃຫ້ອົງການປົກຄອງນະຄອນ, ເຈົ້ານະຄອນລົງພົບປະແລກປ່ຽນຄວາມຄິດເຫັນກັບປະຊາຊົນໃຫ້ຫຼາຍຂຶ້ນ ເພື່ອຮັບຟັງບັນຫາ ແລະ ຮ່ວມກັນຄິດຮ່ວມກັນແກ້ໄຂບັນຫາທີ່ເກີດຂຶ້ນພາຍໃນບ້ານ ມີ 7 ເທື່ອຄົນ, ກວມເອົາ 12 ສ່ວນຮ້ອຍ, ຄວນສະໜັບສະໜູນ ຫຼື ສົ່ງເສີມການສ້າງກຸ່ມ ແລະ ຮ່ວມກຸ່ມກັນເຮັດກິດຈະກຳໃດໜຶ່ງໂດຍນຳໃຊ້ຊັບພະຍາກອນທີ່ມີພາຍໃນຊຸມຊົນບ້ານ ເພື່ອຜະລິດເປັນສິນຄ້າ ສ້າງລາຍຮັບໃຫ້ແກ່ປະຊາຊົນ ມີ 7 ເທື່ອຄົນ, ກວມເອົາ 12 ສ່ວນຮ້ອຍ, ຕໍ່ມາຢາກໃຫ້ຝຶກອົບຮົມກ່ຽວກັບການປູກຝັງລ້ຽງສັດໃຫ້ປະ ຊາຊົນມີຄວາມຮັບຮູ້ເຂົ້າ ໃຈຫຼາຍຂຶ້ນເພື່ອນຳໄປປັບໃຊ້ໃຫ້ມີຜົນຜະລິດຫຼາຍລື່ນເກົ່າ ມີ 6 ເທື່ອຄົນ, ກວມເອົາ 10.3 ສ່ວນຮ້ອຍ, ຢາກໃຫ້ກຳລັງປກສ ສົມທົບກັບອຳນາດການປົກຄອງບ້ານລົງເຄື່ອນໄຫວທັບມ້າງຂະບວນການຄ້າຂາຍຢາເສບຕິດພັນກັບການປະຕິບັດສອງວາລະແຫ່ງຊາດ ໂດຍສະແມ່ນຢາເສບຕິດທຸກປະເພດໃຫ້ໝົດສິ້ນໄປ ມີຈຳນວນ 5 ເທື່ອຄົນ, ກວມເອົາ 8.6 ສ່ວນຮ້ອຍ, ຖ້າມີການປະຊຸມຄວນໃຫ້ຈັດຫຼັງເວລາເລີກວຽກໃນຕອນແລງ ຫຼື ວັນເສົາ-ອາ ທິດ ເພາະຈະເຮັດໃຫ້ປະຊາຊົນຕັດສິນໃຈເຂົ້າຮ່ວມຫຼາຍຂຶ້ນ ມີ 3 ເທື່ອຄົນ, ກວມເອົາ 5.1 ສ່ວນຮ້ອຍ ຕາມລຳດັບ.

## 5. ວິພາກຜົນ

ຜົນການສຶກສາໄດ້ສະແດງໃຫ້ເຫັນວ່າ ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ໂດຍ ລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະດ້ານເຫັນວ່າ ຢູ່ໃນລະດັບຫຼາຍໃນທຸກດ້ານ, ເຊິ່ງດ້ານທີ່ປະຊາຊົນມີສ່ວນຮ່ວມຫຼາຍທີ່ສຸດເປັນອັນດັບທຳອິດ ໄດ້ແກ່ດ້ານການມີສ່ວນຮ່ວມໃນການດຳເນີນງານ , ຮອງລົງມາແມ່ນສ່ວນຮ່ວມໃນການຮັບຜົນປະໂຫຍດ, ສ່ວນຮ່ວມໃນການຕັດສິນໃຈ ແລະ ສ່ວນຮ່ວມໃນການກວດກາປະເມີນຜົນ ຕາມລຳດັບ. ເຊິ່ງກົງກັບການສຶກສາຂອງ ວິສະນຸ ຫຍົກຈິນດາ (2014) ໄດ້ສຶກສາກ່ຽວກັບການມີສ່ວນຮ່ວມຂອງປະຊົນໃນການພັດທະນາຊຸມຊົນ ຕຳບົນພູທັບໄທ ອຳເພີໂປ່ງນ້ຳຮ້ອນ ຈັງຫວັດຈັນທະບູລີ, ປະເທດໄທ. ຜົນການສຶກສາພົບວ່າ: ປະຊາຊົນມີລະດັບການມີສ່ວນຮ່ວມໃນການພັດທະນາຊຸມຊົນ ໂດຍລວມຢູ່ໃນລະດັບຫຼາຍ, ເມື່ອພິຈາລະນາແຕ່ລະດ້ານກໍພົບວ່າຢູ່ໃນລະດັບຫຼາຍ 3 ດ້ານ ຄື: ດ້ານການມີສ່ວນຮ່ວມໃນການຮັບຜົນປະໂຫຍດ, ດ້ານການມີສ່ວນຮ່ວມໃນການຕັດສິນໃຈ ແລະ ດ້ານການມີສ່ວນຮ່ວມໃນການດຳເນີນງານ, ສ່ວນດ້ານການມີສ່ວນຮ່ວມໃນການປະເມີນຜົນແມ່ນຢູ່ໃນລະດັບໜ້ອຍ; ດັ່ງນັ້ນຈຶ່ງເຫັນລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ຍັງເປັນໄປຕາມແນວຄວາມຄິດການມີສ່ວນຮ່ວມຂອງປະຊາຊົນ ເພາະວ່າຈາກການໃຫ້ຄວາມໝາຍຂອງນັກວິຊາການຫຼາຍທ່ານ ທີ່ກ່ຽວ ຂ້ອງກັບການມີສ່ວນຮ່ວມຂອງປະຊາຊົນ ເຊັ່ນ: ປັດສະຍາ ເວສາລັດ (1985) ໄດ້ກ່າວວ່າ ການມີສ່ວນຮ່ວມຂອງປະຊາຊົນສະທ້ອນການເຂົ້າໄປກ່ຽວຂ້ອງໂດຍຄວາມສະໝັກໃຈ , ເປັນປະຊາທິປະໄຕໃນການຕັດສິນໃຈ ເພື່ອກາ ນົດນະໂຍບາຍ, ການວາງແຜນ, ການດຳເນີນງານໂຄງການ

ພັດທະນາເສດຖະກິດ, ສັງຄົມ ແລະ ການແບ່ງຜົນປະໂຫຍດທີ່ເກີດຈາກການພັດທະນາ.

ເມື່ອພິຈາລະໃນແຕ່ລະດ້ານພົບວ່າ:

1) ລະດັບການມີສ່ວນຮ່ວມໃນການຕັດສິນໃຈ ຢູ່ໃນລະດັບຫຼາຍ ເຊິ່ງມີຄວາມສອດຄ່ອງກັບການສຶກສາຂອງ ອັກຄະລະວິດ ເດຊາຣັດຕະນະຊາດ (2007) ໄດ້ສຶກສາເລື່ອງ ການມີສ່ວນຮ່ວມໃນການພັດທະນາທ້ອງຖິ່ນຂອງສະມາຊິກອົງການປົກຄອງ ຕຳບົນໃນອຳເພີສະໂຮງ, ຈັງ ຫວັດອຸບົນຣາຊະທານີ ປະເທດໄທ ດ້ານການມີສ່ວນຮ່ວມໃນການຕັດສິນໃຈຢູ່ໃນລະດັບດີຫຼາຍ.

2) ລະດັບການມີສ່ວນຮ່ວມໃນການດຳເນີນງານ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງກົງກັນຂ້າມກັບການສຶກສາຂອງ ວໍຊີຣະວັນ ນິນເກດ (2010) ໄດ້ສຶກສາກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາທ້ອງຖິ່ນ ກໍ ລະນີສຶກສາອົງການປົກຄອງຕຳບົນເດື່ອ ອຳເພີເມືອງໜອງຄາຍ ຈັງຫວັດໜອງຄາຍ, ປະເທດໄທ ໃນດ້ານການມີສ່ວນຮ່ວມໃນການດຳເນີນງານຢູ່ໃນລະດັບໜ້ອຍ ແລະ ແຕ່ສອດຄ່ອງກັບກັບການສຶກສາຂອງ ປັນຍາທັດ ບົນຂຸນທົດ ແລະ ຄະນະ (2019) ໄດ້ສຶກສາການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາຊຸມຊົນ ຕຳບົນອີສານ ອຳເພີເມືອງ ຈັງຫວັດບູລີລຳ, ປະເທດໄທ, ດ້ານການມີສ່ວນຮ່ວມໃນການດຳເນີນງານ ແມ່ນຢູ່ໃນລະດັບຫຼາຍ.

3) ລະດັບການມີສ່ວນຮ່ວມໃນການຮັບຜົນປະໂຫຍດ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງກົງກັບການສຶກສາຂອງ ອະນິດາ ຣຸ່ງໂຍທິນ (2018) ໄດ້ສຶກສາກ່ຽວການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາຊຸມຊົນ ຕຳບົນບ້ານບຶງ ອຳເພີບ້ານບຶງ ຈັງຫວັດຊົນບູລີ, ປະເທດໄທ ດ້ານການມີສ່ວນຮ່ວມໃນການຮັບຜົນປະໂຫຍດ ຢູ່ໃນລະ ດັບຫຼາຍ, ແຕ່ບໍ່ສອດຄ່ອງກັບຜົນການສຶກສາວິໄຈຂອງ ສຸຊາດ ພຣົກເລັກ (2022) ໄດ້ສຶກສາການມີສ່ວນຮ່ວມໃນການພັດທະນາຊຸມຊົນໃນອົງການບໍລິຫານສ່ວນຕຳບົນໜອງຫົງ ອຳເພີທຸ່ງສົງ ຈັງຫວັດນະຄອນສີທຳມະລາດ ປະເທດໄທ ແລະ ທະວັດໄຊ ສັນຕິທຳໂມ ວັນນາວົນ (2018) ໄດ້ສຶກສາກ່ຽວກັບການມີສ່ວນຮ່ວມຂອງປະຊາ ຊົນໃນການພັດທະນາຊຸມຊົນໃນເຂດເທດສະບານອຳເພີເມືອງສະແກ້ວ ຈັງຫວັດສະແກ້ວ ດ້ານການມີສ່ວນຮ່ວມໃນການຮັບຜົນປະໂຫຍດ ຢູ່ໃນລະດັບປານກາງ.

4) ລະດັບການມີສ່ວນຮ່ວມໃນການກວດກາປະເມີນຜົນ ແມ່ນຢູ່ໃນລະດັບຫຼາຍ ເຊິ່ງບໍ່ສອດຄ່ອງກັບການວິ ໄຈຂອງ ວິສະນຸ ທຍົກຈິນດາ (2014) ໄດ້ສຶກສາເລື່ອງ: ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາໝູ່ກາງ ຕຳບົນພູທັບໄທ ອຳເພີໂປ່ງນ້ຳຮ້ອນ ຈັງຫວັດຈັນທະບູລີ, ປະເທດໄທ. ດ້ານການກວດກາປະເມີນຜົນ ຢູ່ໃນລະດັບໜ້ອຍ. ແຕ່ມີຄວາມສອດຄ່ອງກັບການສຶກສາຂອງ ອະນິດາ ຣຸ່ງໂຍທິນ (2018) ໄດ້ສຶກສາການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາຊຸມຊົນຕຳບົນບ້ານບຶງ ອຳເພີບ້ານບຶງ ຈັງຫວັດຊົນບູລີ, ປະເທດໄທ ດ້ານການມີສ່ວນຮ່ວມໃນການກວດກາປະເມີນຜົນ ຢູ່ໃນລະດັບຫຼາຍ.

**6. ສະຫຼຸບຜົນ**

ການສຶກສາການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ເປັນການວິໄຈທາງປະລິມານ ມີຈຸດປະ ສົງເພື່ອສຶກສາລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ແລະ ເພື່ອຊອກຫາບັນດາຂໍ້ສະເໜີແນະຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ເຊິ່ງປະກອບມີ 4 ດ້ານຄື: 1.) ດ້ານການມີສ່ວນຮ່ວມໃນການຕັດສິນໃຈ , 2.) ດ້ານການມີສ່ວນຮ່ວມໃນການດຳເນີນງານ, 3.) ດ້ານການມີສ່ວນຮ່ວມໃນການຮັບຜົນປະ ໂຫຍດ ແລະ 4.) ດ້ານການມີສ່ວນຮ່ວມໃນການກວດກາປະເມີນຜົນ, ໃຊ້ແບບສອບຖາມໃນການເກັບກຳຂໍ້ມູນທັງໝົດ 351 ສະບັບ, ໂດຍນຳເອົາແບບສອບຖາມໄປແຈກຢາຍໃຫ້ປະຊາຊົນທີ່ອາໄສຢູ່ໃນບ້ານ ແລະ ໃຫ້ເຂົາ ເຈົ້າຕອບດ້ວຍຕົນເອງ, ນຳໃຊ້ໂປຼແກຼມສຳເລັດຮູບທາງສະ ຖິຕິໃນການວິເຄາະຂໍ້ມູນ, ໂດຍວິເຄາະຫາຄ່າສ່ວນຮ້ອຍ ( Percentage:%), ແລະ ຄ່າສະເລ່ຍ

(Mean: $\overline{x}$), ຄ່າຜົນປ່ຽນມາດຕະຖານ (Standard Deviation: S.D)

ຈາກຜົນການສຶກສາສະແດງໃຫ້ເຫັນວ່າ ກຸ່ມຕົວຢ່າງທີ່ຕອບແບບສອບຖາມ ຈຳນວນ 351 ຄົນ ສ່ວນຫຼາຍ ເປັນເພດຊາຍ ມີຈຳນວນ 191 ຄົນ ກວມເອົາອັດຕາສ່ວນ 54.4 ສ່ວນຮ້ອຍ, ມີອາຍຸລະຫວ່າງ 51 ປີຂຶ້ນໄປ ມີຈຳ ນວນ 109 ຄົນ ກວມເອົາອັດຕາສ່ວນ 31.1ສ່ວນຮ້ອຍ, ມີລະດັບການສຶກສາມັດທະຍົມສຶກສາຕອນປາຍ ມີຈຳ ນວນ 168 ຄົນ ກວມເອົາອັດຕາສ່ວນ 47.9 ສ່ວນຮ້ອຍ, ສະຖານະພາບແຕ່ງງານແລ້ວ ມີຈຳນວນ 249 ຄົນ ກວມເອົາອັດຕາສ່ວນ 70.9 ສ່ວນຮ້ອຍ, ປະກອບອາຊີບຄ້າຂາຍ ມີຈຳນວນ 102 ຄົນ ກວມເອົາອັດຕາສ່ວນ 29.1ສ່ວນຮ້ອຍ ແລະ ມີລາຍໄດ້ຕໍ່ເດືອນ 2.500.001-3.000.000 ກີບ ມີຈຳນວນ 129 ຄົນ ກວມເອົາອັດຕາສ່ວນ 36.8 ສ່ວນຮ້ອຍ.

ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະ ເລ່ຍເທົ່າກັບ 3.659 (SD=0.618), ເມື່ອພິຈາລະນາແຕ່ລະດ້ານເຫັນວ່າ ປະຊາຊົນມີລະດັບການມີສ່ວນຮ່ວມຫຼາຍກວ່າໝູ່ ແມ່ນດ້ານການມີສ່ວນຮ່ວມໃນການດຳເນີນງານ ມີຄ່າສະເລ່ຍເທົ່າກັບ 3.861 (SD=0.568), ຮອງລົງມາແມ່ນດ້ານການມີສ່ວນຮ່ວມໃນການຮັບຜົນປະ ໂຫຍດ ມີຄ່າສະເລ່ຍເທົ່າກັບ 3.663 (SD=0.578) ຖັດມາແມ່ນດ້ານການມີສ່ວນຮ່ວມໃນການຕັດສິນໃຈ ມີຄ່າສະເລ່ຍເທົ່າກັບ 3.563 (SD=0.733) ແລະ ດ້ານການມີສ່ວນຮ່ວມໃນການກວດກາປະເມີນຜົນ ມີຄ່າສະເລ່ຍເທົ່າກັບ 3.552 (SD=0.618).

ຈາກການສັງລວມຄວາມຄິດເຫັນຂອງປະຊາຊົນທີ່ກ່ຽວກັບຂໍ້ສະເໜີແນະເພີ່ມຕື່ມໃນການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາບ້ານໃຫຍ່ໂນນສະຫວ່າງ ນະຄອນປາກເຊ ແຂວງຈຳປາສັກ ມີດັ່ງນີ້:

- ອຳນາດການປົກຄອງບ້ານຄວນເອົາໃຈໃສ່ປຸກລະດົມການຮັກສາຄວາມສະອາດສວຍງາມພາຍໃນບ້ານ, ຈັດໃຫ້ມີການເຮັດອະນາໄມຮ່ວມກັນຫຼາຍກວ່າເກົ່າ ແລະ ມີການບູລະນະສ້ອມແປງເສັ້ນທາງໃນແຕ່ລະຮ່ອມ ເພື່ອໃຫ້ມີຄວາມສະດວກສະບາຍໃນການສັນຈອນໄປມາ.
- ອຳນາດການປົກຄອງບ້ານ ຄວນເປີດໂອກາດໃຫ້ປະ ຊາຊົນເຂົ້າມາມີສ່ວນຮ່ວມໃນການດຳເນີນງານຢ່າງຕໍ່ເນື່ອງ ເພື່ອເປັນການແກ້ໄຂບັນຫາໃດໜຶ່ງຂອງບ້ານ ໂດຍສະ ເພາະແມ່ນບັນຫາທີ່ກ່ຽວຂ້ອງກັບຄວາມເດືອດຮ້ອນຂອງປະຊາຊົນໂດຍກົງ.
- ຄວນມີການສົ່ງເສີມສ້າງວຽກເຮັດງານທຳໃຫ້ປະຊາ ຊົນພາຍໃນບ້ານ ໂດຍສະເພາະຊາວໜຸ່ມໄວໜຸ່ມໃຫ້ມີລາຍຮັບຊ່ວຍເຫຼືອຕົນເອງ ແລະ ຄອບຄົວເພື່ອໃຫ້ເຂົາ ເຈົ້າຫ່າງໄກຈາກຢາເສບຕິດອີກດ້ວຍ.
- ຢາກໃຫ້ອົງການປົກຄອງນະຄອນ, ເຈົ້ານະຄອນລົງພົບປະແລກປ່ຽນຄວາມຄິດເຫັນກັບປະຊາຊົນໃຫ້ຫຼາຍຂຶ້ນ ເພື່ອຮັບຟັງບັນຫາ ແລະ ຮ່ວມກັນຄິດຮ່ວມກັນແກ້ໄຂບັນຫາທີ່ເກີດຂຶ້ນພາຍໃນບ້ານ.
- ຄວນມີການສົ່ງເສີມ ຫຼືສະໜັບສະໜູນການສ້າງກຸ່ມ ແລະ ຮ່ວມກຸ່ມກັນເຮັດກິດຈະກຳໃດໜຶ່ງໂດຍນຳໃຊ້ຊັບ ພະຍາກອນທີ່ມີພາຍໃນບ້ານ ເພື່ອຜະລິດເປັນສິນຄ້າ ສ້າງລາຍຮັບໃຫ້ແກ່ປະຊາຊົນ.
- ຄວນມີການຝຶກອົບຮົມກ່ຽວກັບການປູກຝັງ-ລ້ຽງ ສັດ ເພື່ອໃຫ້ປະຊາຊົນມີຄວາມຮັບຮູ້ເຂົ້າໃຈຫຼາຍຂຶ້ນເພື່ອນຳໄປປັບໃຊ້ໃຫ້ມີຜົນຜະລິດຫຼາຍລື່ນເກົ່າ.
- ຢາກໃຫ້ມີການປະສານສົມທົບຢ່າງກົມກຽວລະ ຫວ່າງກຳລັງ ປກສ ກັບອຳນາດການປົກຄອງບ້ານ ແລະ ປະຊາຊົນ ໃນການລົງເຄື່ອນໄຫວທັບມ້າງຂະບວນການຄ້າຂາຍຢາເສບຕິດພົນກັບການປະຕິບັດສອງວາລະແຫ່ງຊາດ ໂດຍສະແມ່ນຢາເສບຕິດທຸກປະເພດໃຫ້ໝົດສິ້ນໄປ.

- ຖ້າມີການປະຊຸມຄວນໃຫ້ຈັດຂຶ້ນໃນຕອນແລງ ຫຼັງເວລາເລີກວຽກ ຫຼື ວັນເສົາ-ອາທິດ ເພາະວ່າອາດຈະເຮັດໃຫ້ປະຊາຊົນຕັດສິນໃຈເຂົ້າຮ່ວມຫຼາຍຂຶ້ນ.

## 7. ເອກະສານອ້າງອີງ


ໂກວິດ ພວງງາມ. (2010). ການປົກຄອງທ້ອງຖິ່ນໄທ ເອ ກະສານຕຳລາຫຼັກປະກອບການຮຽນການສອນຫຼັກສູດລັດ ຖະສາດບັນດິດ. ສາຂາການປົກຄອງທ້ອງຖິ່ນ ວິຊາການເມືອງການປົກຄອງສ່ວນທ້ອງ ຖິ່ນໄທ. ກຸງເທບມະ ຫານະຄອນ: ເອັກເປີເນັດ.

ກົມພັດທະນາຊຸມຊົນ. (1984). ການພັດທະນາຊຸມຊົນ. ກຸງເທບມະຫານະຄອນ: ກົມພັດທະນາຊຸມຊົນ.

ໂຄສິດ ປັ້ນປ່ຽມສຸກ. (1993). ການພັດທະນາປະເທດໄທ: ແນວຄວາມຄິດ ແລະ ທິດທາງ. ພິມຄັ້ງທີ 2. ກຸງເທບ: ສຳ ນັກງານຄະນະກຳມະການພັດທະນາການເສດຖະກິດ ແລະສັງຄົມແຫ່ງຊາດ.

ຈິດຕິມາ ອັກຄະຣາຕິພົງ. (2014). ຄູ່ມືນັກພັດທະນາເລື່ອງການຈັດການຂະບວນການຮຽນຮູ້ແບບມີສ່ວນຮ່ວມ. ຈັດພິມຄັ້ງທີ 2, ກຸງເທບມະຫານະຄອນ: ບາງກອກບຸ໋ອກ.

ຈຳລັດ ນວນນິ່ມ. (1997). ການພັດທະນາຊຸມຊົນ, ກຸງເທບມະຫານະຄອນ: ໂຮງພິມຄຸລຸດສະພາລາດພ້າວ, ປະເທດໄທ.

ສົມສັກ ສີສັນຕິສຸກ. (1982). ສັງຄົມວິທະຍາຊຸມຊົນ: ຫຼັກການສຶກສາວິເຄາະ ແລະ ປະຕິບັດງານຊຸມຊົນ. ຂອນແກ່ນ: ພາກວິຊາສັງຄົມວິທະຍາ ແລະ ມະນຸດວິທະຍາ, ຄະນະມະນຸດສາດ ແລະ ສັງຄົມສາດ: ມະຫາວິທະຍາໄລຂອນແກ່ນ, ປະເທດໄທ.

ສຸຊາດ ພຣົກເລັກ. (2022). ສຶກສາການມີສ່ວນຮ່ວມໃນການພັດທະນາຊຸມຊົນໃນອົງການບໍລິຫານສ່ວນຕຳບົນໜອງຫົງ ອຳເພີທົ່ງສົງ ຈັງຫວັດນະຄອນສີທຳມະລາດ, ປະເທດໄທ.

ສຸທີ ສອນສະຫວັນ. (1995). ປັດໃຈທີ່ມີອິດທິພົນຕໍ່ການມີສ່ວນຮ່ວມຂອງປະຊາຊົນ: ສຶກສາສະເພາະກໍລະນີຕຳບົນຄອງຕະຄຽນ ອຳເພີພະນະຄອນສີອະຍຸດທະຍາ. ກຸງເທບມະຫານະຄອນ: ສະຖາບັນບັນດິດພັດທະນາບໍລິຫານສາດ.

ສົນທະຍາ ພົນສີ. (2004). ທິດສະດີ ແລະ ຫຼັກການພັດ ທະນາຊຸມຊົນ. (ພິມຄັ້ງທີ 5): ກຸງເທບມະຫານະ ຄອນ.

ສົນຍາ ສົນຍາວິວັດ. (1983). ການພັດທະນາຊຸມຊົນ. ກຸງເທບມະຫານະຄອນ, ປະເທດໄທ: ໄທວັດທະ ນາພານິດ.

ຍຸວັດ ວຸດເມທີ. (1991). ການພັດທະນາຊຸມຊົນຈາກທິດສະດີສູ່ການປະຕິບັດ. ກຸງເທບມະຫານະຄອນ: ຫ້າງຫຸ້ນສ່ວນຈຳກັດບາງກອກບຸ໋ອກ.

ຕິນ ປັດສະຍາພຶດ. (1991). ທິດສະດີອົງການ, ກຸງເທບ: ໄທວັດທະນາພານິດ, ປະເທດໄທ.ຈັດພິມຄັ້ງທີ 2.

ຖາວິນອະດີ ບູລິກຸນ, ການມີສ່ວນຮ່ວມ, ແນວຄິດ, ທິດສະດີ ແລະ ຂະບວນການ.

ທິດສະພົນ ກິດຕະຍະພິສິດ. (2007). ການພັດທະນາໃນແຜນພັດທະນາທີ່ປ່ຽນແປງໄປ. (ອອນລາຍ) ແຫຼ່ງທີ່ມາ: WWW.bangkokbiznews.com. 21 ພຶດສະພາ 2012.

ທົງໄຊ ສັນຕິວົງ. (1987). ອົງການ ແລະ ການບໍລິຫານ, ພິມຄັ້ງທີ 5 ກຸງເທບມະຫານະຄອນ: ໄທວັດທະ ນະພານິດ, ປະເທດໄທ.

ນະລິນໄຊ ພັດທະນາພົງສາ. (2004). ການມີສ່ວນຮ່ວມ, ຫຼັກການພື້ນຖານ, ເຕັກນິກ ແລະ ກໍລະນີຕົວຢ່າງ, ພິມຄັ້ງທີ 2,(ຈັງຫວັດຊຽງໃໝ່: ສີລິລັກການພິມ).

ປັນຍາທັດ ບົນຂຸນທົດ ແລະ ຄະນະ. (2019). ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາຊຸມຊົນ ຕຳບົນອີສານ ອຳເພີເມືອງ ຈັງຫວັດບູລີລຳ, ປະເທດໄທ (Journal of Graduate

MCU KhonKaen Campus, Vol.6.1 January-March 2019.
ປະກອນ ປຣິຍາກອນ. ( 2001). ທິດສະດີ ແລະ ແນວຄິດກ່ຽວກັບການພັດທະນາ. ກຸງເທບ: ສາມຈະເລີນພານິດ.
ໄພລັດ ໄຕຊະລິນ. (1982). ທົບທວນການພັດທະນາຊົນ ນະບົດຂອງໄທ, (ກຸງເທບ: ໂຮງພິມດີແອນເອສ).
ພຣະທະວັດໄຊ ສັນຕິທຳໂມ ວັນນາວົນ. (2018). ສຶກສາກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາຊຸມຊົນໃນເຂດເທດສະບານອຳເພີເມືອງສະແກ້ວ ຈັງຫວັດສະແກ້ວ: ປະເທດໄທ.
ພັນເພັນ ວັດທະນະມົງຄົນລາບ. (2017). ແນວທາງໃນການພັດທະນາຊຸມຊົນໃນເຂດອຳເພີເມືອງແພຣ່ໃຫ້ເປັນແຫຼ່ງທ່ອງທ່ຽວທາງວັດທະນະທຳຢ່າງຍືນຍົງ.ການຄົ້ນຄວ້າອິດສະຫຼະສິລະປະສາດມະຫາ ບັນດິດ ສາຂາວິຊາການຈັດການອຸດສະຫະກຳການບໍລິການ ແລະການທ່ອງທ່ຽວ, ມະຫາວິທະ ຍາໄລກຸງເທບ: ປະເທດໄທ.
ພັດສະຣີ ກຸນທີທອງ. (2008). ການສຶກສາກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນໃນຊຸມຊົນພັດທະນາເທດສະ ບານອຳເພີຊະອຳ, ເພັດສະບູລີ ປະເທດໄທ.
ພັດ ບຸນຍະລັດນະພັນ. (1974). ການສ້າງພະລັງງານຊຸມຊົນໂດຍຂະບວນການພັດທະນາຊຸມຊົນ. ກຸງເທບມະຫານະ ຄອນ: ເລີບ ແລະ ລີບເພຣສ.
ມາລີ ເບັນຈະມະໂນ. (2003). ການມີສ່ວນຮ່ວມຂອງປະຊາຊົນໃນການດຳເນີນງານຂອງອົງການບໍລິ ຫານສ່ວນຕຳບົນ ສຶກສາກໍລະນີອົງການບໍລິຫານສ່ວນຕຳບົນຫ້ວຍກະປິ. ປັນຫາພິເສດ ຣປ.ມ. (ນະໂຍບາຍສາທາລະນະ). ຈັງ ຫວັດຊົນບູລີ, ບັນ ດິດວິທະຍາໄລ: ມະຫາວິທະຍາໄລບູລະພາ.
ມະຍຸລີ ວັດແກ້ວ. (1992). ທິດສະດີ ແລະ ຫຼັກການພັດ ທະນາຊຸມຊົນ, ຈັງຫວັດເພັດບູລີ: ຄະນະວິຊາມະນຸດສາດ ແລະ ສັງຄົມສາດ: ວິທະຍາໄລຄູເພັດບູລີ.
ອະນິດາ ຮຸ່ງໂຍທິນ. ( 2018, ບົດຄັດຫຍໍ້). ໄດ້ສຶກສາການມີສ່ວນຮ່ວມຂອງປະຊາຊົນໃນການພັດທະ ນາຊຸມຊົນຕຳບົນບ້ານບຶງ ອຳເພີບ້ານບຶງຈັງຫວັດຊົນບູລີ, ສາຂາວິຊາການເມືອງການປົກຄອງ: ມະ ຫາວິທະຍາໄລບູລະພາ, ປະເທດໄທ.
ວັນຮັກ ມິ່ງມະນີນາຄິນ. (1988). ການພັດທະນາຊົນນະ ບົດໄທ. ກຸງເທບ: ມະຫາວິທະຍາໄລທຳມະສາດ.
ວຸດທິສານ ຕັນໄຊ. (2003). ການກະຈາຍອຳນາດ ແລະ ການປົກຄອງທ້ອງຖິ່ນ, (ກຸງເທບ: ທຳມະດາເພຣສ).
ວິສະນຸ ຫຍົກຈິນດາ. (2014). ສຶກສາກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາຊຸມຊົນ ບ້ານທັບໄທ ອຳເພີໂປ່ງນ້ຳຮ້ອນ ຈັງຫວັດຈັນ ທະບູລີ: ປະເທດໄທ
ອໍຊີຣະວັນ ນິນເກດ. (2010). ການສຶກສາກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາທ້ອງຖິ່ນ ກໍລະ ນີສຶກສາອົງການປົກຄອງຕຳບົນເດື່ອ ອຳເພີເມືອງໜອງຄາຍ ຈັງຫວັດໜອງຄາຍ: ປະເທດໄທ
ອໍລະໄທ ພຣະທັດ. (2015). ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາຊຸມຊົນໃນພື້ນທີ່ເກາະລັດຕະນະໂກສິນ, ກໍລະນີສຶກສາ:ຊຸມຊົນປ້ອມມະ ຫາການ, (ຄະນະລັດຖະສາດ ມະວິທະຍາໄລທຳມະສາດ ປະເທດໄທ:ການຄົ້ນຄວ້າອິດສະຫຼະ).
ອໍລະໄທ ກົກຜົນ. (2009). ຄູ່ຄິດ ຄູ່ມືການມີສ່ວນຮ່ວມຂອງປະຊາຊົນ ສຳລັບນັກບໍລິຫານທ້ອງຖິ່ນ, ກຸງເທບມະຫານະຄອນ, ປະເທດໄທ: ຈະລັນສະນິດວົງການພິມ.

ອໍລະໄທ ກິກພິນ. (2003). ຄູ່ມືການມີສ່ວນຮ່ວມຂອງປະຊາຊົນ. ກຸງເທບ: ມູນລະນິທິປະລິນຍາໂທສຳ ລັບນັກບໍລິ ຫານລັດຖະກິດ: ມະຫາວິທະຍາໄລທຳມະສາດ ປະເທດໄທ.

ອຳມອນລັດ ໄຊຂັນເມືອງ. (2004). ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາຊຸມຊົນຍ່ອຍພາຍໃນເຂດເທດສະບານເມືອງ: ກໍລະນີສຶກສາເທດສະບານແຫຼມສະບັບ ຈັງຫວັດຊົນບູລີ: ມະ ຫາວິທະຍາໄລບູລະພາ.

ອາທິດ ເວສາລັດ. (1985). ການມີສ່ວນຮ່ວມຂອງປະ ຊາຊົນໃນການພັດທະນາຊົນນະບົດ, ມະຫາວິທະ ຍາໄລທຳມະສາດ, ກຸງເທບມະຫານະຄອນ ປະ ເທດໄທ.

ອາຄົມ ລະພິພັດ. (2004). ການມີສ່ວນຮ່ວມຂອງປະຊາ ຊົນໃນການພັດທະນາ, (ກຸງເທບ: ສູນການສຶກສານະໂຍບາຍສາທາລະນະສຸກ).

ອັກຄະລະວິດ ເດຊາຣັດຕະນະຊາດ.(2007). ໄດ້ສຶກສາກ່ຽວກັບ: ການມີສ່ວນຮ່ວມໃນການພັດທະນາທ້ອງຖິ່ນຂອງສະມາຊິກອົງການປົກຄອງຕຳບົນໃນ ອຳເພີສະໂຮງ, ຈັງຫວັດອຸບົນຣາຊະທານີ, ປະເທດໄທ.

ອຳນາດການປົກຄອງບ້ານໂນນສະຫວ່າງ. (2022). ບົດສະຫຼຸບປະຈຳປີ: ນະຄອນປາກເຊ

ອົງການປົກຄອງນະຄອນປາກເຊ. (2022). ບົດສະຫຼຸບວຽກງານການສ້າງຮາກຖານ: ນະຄອນປາກເຊ.

Arnstein, S. R. (1969). Ladder of citizen participation. *Journal of American Institute of Planners,*(35), 216-224

Cohen, J. M., & Uphoff, N. T. (1980). *Participation place in rural development: Seeking clarity through specificity, world development.* New York: Cornell University.

Huntington, S. & Nelson, S. (1975). *No easy choice: political participation in developing countries.* New York: Harvard University Press.

Keith, D. D. (1972). Human behavior at work human relations and organization behavior. *New Planner*, *35*, 216-224

United Nations. (1981). *Yearbook of International Trade Statistics.* United Nations: UN Press.

Vroom, V. H., & Deci, E. L. (1970). *Management and motivation.* New York: Penguen Book.

WHO and UNICEF .(1978). Report of the international conference on primary health care, (New York: N.P.Press).

Yamane, T. (1973). Statistics: An Introductory Analysis. 3rd Edition Harpe and Row, New york.